EY
Building a better working world

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

ເລກທີອ້າງອີງ: 60956549/22224723-LAS

**ບົດລາຍງານຂອງນັກກວດສອບອິດສະຫຼະ**

**ຮຽນ: ເຈົ້າຂອງ ຂອງທະນາຄານ ຮ່ວມພັດທະນາ ຈຳກັດ**

***ຄຳເຫັນ***

ພວກຂ້າພະເຈົ້າ ໄດ້ດຳເນີນການກວດສອບເອກະສານລາຍງານການເງິນຂອງ ທະນາຄານ ຮ່ວມພັດທະນາ ຈຳກັດ (“ທະນາຄານ”), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນນະວັນທີ 31 ທັນວາ 2020, ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ, ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ທີ່ປະກອບດ້ວຍບົດສະຫຼຸບຂອງບັນດານະໂຍບາຍທາງບັນຊີທີ່ສຳຄັນ.

ໃນຄຳເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນຂອງທະນາຄານໄດ້ຖືກກະກຽມໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີແຫ່ງ ສປປ ລາວ ແລະ ບັນດາລະບຽບການຕ່າງໆທີ່ໄດ້ວາງອອກໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

***ພື້ນຖານການອອກຄຳເຫັນ***

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບມາດຕະຖານດ້ານການກວດສອບສາກົນ. ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າທີ່ກຳນົດໄວ້ພາຍໃຕ້ບັນດາມາດຕະຖານເຫຼົ່ານັ້ນໄດ້ຖືກອະທິບາຍເພີ່ມເຕີມ ໃນວັກ *ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນ* ໃນບົດລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າແມ່ນມີຄວາມເປັນເອກະລາດຈາກທະນາຄານໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານດ້ານຈັນຍາບັນສາກົນ ແລະ ບັນດາຂໍ້ກຳນົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານດ້ານຈັນຍາບັນສາກົນ.ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

***ບັນຫາທີ່ຄວນເອົາໃຈໃສ່***

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ ບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນ, ທີ່ໄດ້ອະທິບາຍພື້ນຖານຂອງການບັນຊີທີ່ໄດ້ຖືກນຳໃຊ້ໂດຍທະນາຄານ. ບັນດານະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີຖານະທາງການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດຂອງທະນາຄານ ເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ.

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ ບົດອະທິບາຍເລກທີ 23 – ອາກອນ ຂອງເອກກະສານລາຍງານການເງິນທີ່ໄດ້ອະທິບາຍເຖິງໜັງສືແຈ້ງການຂອງກະຊວງການເງິນທີ່ຮຽກຮ້ອງໃຫ້ທະນາຄານທຸລະກິດຄິດໄລ່ອາກອນກຳໄລຄືນແຕ່ປີ 2016 ເຖິງ 2019 ແລະ ຜົນກະທົບທີ່ອາດຈະເກີດຂຶ້ນກັບລາຍການທີ່ບໍ່ອະນຸຍາດໃຫ້ເປັນລາຍຈ່າຍສຳລັບການຄິດໄລ່ອາກອນກຳໄລໃນຊ່ວງໄລຍະເວລາດັ່ງກ່າວ ເຊິ່ງຍັງລໍຖ້າຄວາມກະຈ່າງແຈ້ງ ແລະ ຄຳແນະນຳລະອຽດໃນການຈັດຕັ້ງປະຕິບັດຈາກໜ່ວຍງານທີ່ໄດ້ຮັບຜິດຊອບ.

ຄຳເຫັນຂອງພວກຂ້າພະເຈົ້າບໍ່ໄດ້ຮັບການແກ້ໄຂຕໍ່ກັບບັນຫານີ້.

EY

Building a better working world

*ຄວາມຮັບຜິດຊອບຂອງຄະນະບໍລິຫານທະນາຄານຕໍ່ເອກະສານລາຍງານການເງິນ*

ຄະນະບໍລິຫານທະນາຄານແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີ ແຫ່ງ ສປປ ລາວ ແລະ ບັນດາລະບຽບການອື່ນໆທີ່ອາງອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ ແລະ ສຳລັບບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະບໍລິຫານເຫັນວ່າ ມີຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫລວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫລື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານມີໜ້າທີ່ຮັບຜິດຊອບການປະເມີນຄວາມສາມາດຂອງທະນາຄານເພື່ອດຳເນີນທຸລະກິດບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ການເປີດເຜີຍ, ສິ່ງທີ່ຍອມຮັບໄດ້, ບັນຫາທີ່ເກີດຂຶ້ນທີ່ມີຄວາມສອດຄ່ອງກັບກັບຄວາມສືບເນື່ອງໃນການດຳເນີນທຸລະກິດ ແລະ ນຳໃຊ້ຫຼັກການບັນຊີຕາມພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດເວັ້ນເສຍແຕ່ວ່າຄະນະບໍລິຫານຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະບໍລິຫານ ມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

*ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ*

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອຮັບເອົາການຮັບປະກັນທີ່ສົມເຫດສົມຜົນວ່າ ເອກະສານລາຍງານການເງິນໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫລື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອການອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບນັ້ນ ຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າ ສຳຄັນ ຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ເອກະສານລາຍງານການເງິນ.

ໃນການກວດສອບໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫລວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ ຄວາມສ່ຽງຈາກການທີ່ບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຄວາມສ່ຽງທີ່ມີຜົນມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງທະນາຄານ.
- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນຳໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຂອງຄະນະບໍລິຫານ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດເກີດຂຶ້ນຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໃສທີ່ສຳຄັນກ່ຽວກັບຄວາມອາດສາມາດຂອງທະນາຄານ ໃນຄວາມສືບເນື່ອງໃນການດຳເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າສະຫຼຸບໄດ້ວ່າ ມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ເພື່ອໃຫ້ສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄຳເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມ

EY
Building a better
working world

ຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອານະຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ທະນາຄານຢຸດຕິການສືບຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ.

- ປະເມີນຄວາມເໝາະສົມຂອງນະໂຍບາຍບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນການບັນຊີ ແລະ ການເປີດເຜີຍທີ່ສ້າງຂຶ້ນໂດຍຄະນະບໍລິຫານຂອງທະນາຄານ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະບໍລິຫານຂອງທະນາຄານ ກ່ຽວກັບການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ພົບເຫັນທາງການກວດສອບທີ່ສຳຄັນ ລວມທັງບັນດາຂໍ້ບົກຜ່ອງທີ່ສຳຄັນໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າກຳນົດໄດ້ໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

**ບໍລິສັດ ເອີນແອນຢັງ ລາວ ຈຳກັດ**

ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ ERNST & YOUNG LAO CO.,LTD

Anh Hoang Trinh
ຂາຮຸ້ນ
ໃບອະນຸຍາດດຳເນີນການກວດສອບ
ໃບຢັ້ງຢືນເລກທີ: 014/LCPAA-APT-2019

ນະຄອນຫຼວງວຽງຈັນ, ສປປ ລາວ

27 ພຶດສະພາ 2021

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານຜົນການດຳເນີນງານ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020

| ລ/ດ | ລາຍການ | ບົດອະທິບາຍ ເລກທີ | 2020 ກີບ | 2019 ກີບ |
|---|---|---|---|---|
| **ກ.** | **ລາຍຮັບ ແລະ ລາຍຈ່າຍຈາກການດຳເນີນງານ** | | | |
| **1** | **ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ** | **3** | **329,731,830,822** | **238,383,764,017** |
| **2** | **ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ** | **3** | **(259,603,257,712)** | **(184,152,289,220)** |
| **I.** | **ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | | **70,128,573,110** | **54,231,474,797** |
| **3** | **ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ** | **4** | **141,232,161,868** | **99,250,348,481** |
| **4** | **ລາຍຈ່າຍຈາກຄ່າທຳນຽມ ແລະ ຄ່າບໍລິການ** | **4** | **(9,434,253,380)** | **(9,207,260,176)** |
| **5** | **(ຂາດທຶນ)/ກຳໄລສຸດທິຈາກການລົງທຶນໃນຫຼັກຊັບ** | **5** | **(930,000,000)** | **4,382,666,667** |
| **6** | **ກຳໄລສຸດທິຈາກການຊື້ - ຂາຍເງິນຕາຕ່າງປະເທດ** | **8** | **26,515,104,641** | **12,127,020,674** |
| **II.** | **ລາຍຮັບສຸດທິຈາກການດຳເນີນງານ** | | **227,511,586,239** | **160,784,250,443** |
| **ຂ.** | **ລາຍຮັບ ແລະ ລາຍຈ່າຍອື່ນໆ** | | | |
| **7** | **ລາຍຮັບອື່ນໆຈາກການດຳເນີນງານ** | **6** | **8,487,552,820** | **2,181,384,088** |
| **8** | **ລາຍຈ່າຍບໍລິຫານ** | | **(95,100,281,034)** | **(83,045,051,566)** |
| 8.1 | ລາຍຈ່າຍເງິນເດືອນ ແລະ ຄ່າໃຊ້ຈ່າຍບຸກຄະລາກອນອື່ນໆ | 7 | (48,330,262,130) | (43,700,802,760) |
| 8.2 | ລາຍຈ່າຍບໍລິຫານອື່ນໆ | 9 | (46,770,018,904) | (39,344,248,806) |
| **9** | **ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ** | **17** | **(21,034,031,212)** | **(24,293,402,766)** |
| **10** | **ລາຍຈ່າຍອື່ນໆຈາກການດຳເນີນງານ** | **10** | **(12,768,250,609)** | **(4,741,454,675)** |
| **11** | **ເງິນແຮສຸດທິສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ** | **15** | **2,076,211,390** | **271,755,361** |
| **III.** | **ກຳໄລທັງໝົດກ່ອນຫັກອາກອນ** | | **109,172,787,594** | **51,157,480,885** |
| **12** | **ລາຍຈ່າຍອາກອນກຳໄລ** | **23.1** | **(23,489,074,122)** | **(11,495,662,665)** |
| **IV.** | **ກຳໄລຫຼັງຫັກອາກອນ** | | **85,683,713,472** | **39,661,818,220** |

ກະກຽມໂດຍ:

ທ່ານ ຄຳສິງ ສອນສິນນະວົງ
ຮອງຜູ້ອຳນວຍການໃຫຍ່ ແລະ ຫົວໜ້າພະແນກບັນຊີ

ອະນຸມັດໂດຍ:

ທ່ານ ວິໄລ ສິພະພອນ
ຜູ້ອຳນວຍການໃຫຍ່

ທະນາຄານ ແຫ່ງ ... ຮ່ວມພັດທະນາ ຈຳກັດ JOINT DEVELOPMENT BANK ນະຄອນຫຼວງວຽງຈັນ

ນະຄອນຫຼວງວຽງຈັນ, ສປປ ລາວ

27 ມິຖຸນາ 2021

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2020

| ລ/ດ | ຊັບສິນ | ບົດອະທິບາຍ ເລກທີ | 31/12/2020 ກີບ | 31/12/2019 ກີບ |
|---|---|---|---|---|
| **I** | **ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ("ທຫລ")** | | **2,186,223,607,571** | **869,843,706,547** |
| 1 | ເງິນສົດໃນຄັງ | 11 | 720,715,407,800 | 395,293,690,118 |
| 2 | ເງິນຝາກຢູ່ ທຫລ | 12 | 1,465,508,199,771 | 474,550,016,429 |
| **II** | **ໜີ້ຕ້ອງຮັບຈາກທະນາຄານອື່ນ** | **13** | **236,012,927,446** | **260,456,344,730** |
| 1 | ເງິນຝາກກະແສລາຍວັນ | | 173,200,203,737 | 204,214,554,457 |
| 2 | ເງິນຝາກມີກຳນົດ | | 18,502,000,000 | 17,686,000,000 |
| 3 | ເງິນຝາກປະຢັດ | | 44,310,723,709 | 38,555,790,273 |
| **III** | **ການລົງທຶນໃນຫຼັກຊັບ** | **14** | **29,350,000,000** | **53,250,000,000** |
| 1 | ຫຼັກຊັບມີໄວ້ເພື່ອຂາຍ | | 2,350,000,000 | 3,380,000,000 |
| 2 | ຫຼັກຊັບຖືໄວ້ຈົນຄົບກຳນົດ | | 27,000,000,000 | 49,870,000,000 |
| **IV** | **ເງິນກູ້ໃຫ້ແກ່ລູກຄ້າ, ຫັກລົບເງິນແຮສະເພາະສຳລັບກິດຈະກຳສິນເຊື່ອ** | **15** | **4,595,516,104,427** | **3,314,709,075,162** |
| **V** | **ການລົງທຶນໃນການບໍລິສັດຮ່ວມທຶນ** | **16** | **854,440,000** | **514,440,000** |
| **VI** | **ຊັບສິນບັດຄົງທີ່** | **17** | **233,469,119,490** | **231,913,316,264** |
| 1 | ຊັບສິນບັດຄົງທີ່ພວມກໍ່ສ້າງ | | 2,751,157,513 | 1,183,081,956 |
| 2 | ຊັບສິນບັດຄົງທີ່ບໍ່ມີຕົວຕົນ | | 137,921,992,665 | 145,664,365,355 |
| 3 | ຊັບສິນບັດຄົງທີ່ມີຕົວຕົນ ແລະ ສິດໃນການໃຊ້ຊັບສິນ | | 92,795,969,312 | 85,065,868,953 |
| **VII** | **ຊັບສິນອື່ນໆ** | | **397,622,772,236** | **287,355,743,732** |
| 1 | ດອກເບ້ຍຄ້າງຮັບ | | 33,723,803,830 | 27,631,186,213 |
| 2 | ຊັບສິນອື່ນໆ | 18 | 363,898,968,406 | 259,724,557,519 |
| | **ລວມຊັບສິນ** | | **7,679,048,971,170** | **5,018,042,626,435** |

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2020

| ລ/ດ | ໜີ້ສິນ ແລະ ທຶນ | ບົດອະທິບາຍ ເລກທີ | 31/12/2020 ກີບ | 31/12/2019 ກີບ |
|---|---|---|---|---|
| **I** | **ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນໆ** | **19** | **943,108,026,948** | **115,057,536,226** |
| 1 | ເງິນຝາກກະແສລາຍວັນ | | 1,448,026,948 | 4,313,536,226 |
| 2 | ເງິນຝາກມີກຳນົດ | | 168,360,000,000 | 110,744,000,000 |
| 3 | ເງິນກູ້ຢືມ | | 773,300,000,000 | - |
| **II** | **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | **20** | **5,945,354,898,355** | **4,240,094,658,789** |
| 1 | ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ | | 1,552,200,736,325 | 1,291,309,508,575 |
| 2 | ເງິນຝາກມີກຳນົດ | | 4,393,152,311,830 | 2,948,783,187,593 |
| 3 | ໜີ້ຕ້ອງສົ່ງອື່ນໆໃຫ້ລູກຄ້າ | | 1,850,200 | 1,962,621 |
| **III** | **ໜີ້ສິນອື່ນໆ** | | **223,783,535,954** | **157,407,034,201** |
| 1 | ດອກເບ້ຍຄ້າງຈ່າຍ | | 188,469,815,564 | 131,868,440,476 |
| 2 | ໜີ້ຕ້ອງສົ່ງອື່ນໆ | 21 | 35,313,720,390 | 25,538,593,725 |
| | **ລວມໜີ້ສິນ** | | **7,112,246,461,257** | **4,512,559,229,216** |
| IV | **ທຶນເຈົ້າຂອງ ແລະ ຄັງສຳຮອງ** | | | |
| 1 | ທຶນຈົດທະບຽນຖອກແລ້ວ | | 404,666,100,000 | 404,666,100,000 |
| 2 | ຄັງສະສົມຕາມລະບຽບການ | | 8,960,056,385 | 391,685,038 |
| 3 | ຄັງສະສົມຂະຫຍາຍທຸລະກິດ | | 4,834,702,916 | 550,517,242 |
| 4 | ຄັງສຳຮອງຈາກການຕີມູນຄ່າ | | 94,029,775,080 | 94,029,775,080 |
| 5 | ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ | | 22,695,329,628 | 16,488,032,405 |
| 6 | ກຳໄລ/(ຂາດທຶນ) ສະສົມ | 22 | 31,616,545,904 | (10,642,712,546) |
| | **ລວມທຶນ** | | **556,802,509,913** | **505,483,397,219** |
| | **ລວມໜີ້ສິນ ແລະ ທຶນ** | | **7,679,048,971,170** | **5,018,042,626,435** |

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2020

| ລ/ດ | ລາຍການນອກໃບລາຍງານຖານະການເງິນ | ບົດອະທິບາຍ ເລກທີ | 31/12/2020 ກີບ | 31/12/2019 ກີບ |
|---|---|---|---|---|
| I | **ຄຳໝັ້ນສັນຍາ** | | | |
| A | **ຄຳໝັ້ນສັນຍາທາງການເງິນ** | | **5,273,070,000** | **76,728,588,680** |
| 1 | ຄຳໝັ້ນສັນຍາທາງການເງິນໃຫ້ກັບລູກຄ້າ | | 5,273,070,000 | 76,728,588,680 |
| B | **ຄຳໝັ້ນສັນຍາໃນການຄ້ຳປະກັນ** | | **100,972,973,970** | **11,340,818,475** |
| 1 | ຄຳໝັ້ນສັນຍາໃນການຄ້ຳປະກັນໃຫ້ລູກຄ້າ | | 100,972,973,970 | 11,340,818,475 |
| | **ລວມຄຳໝັ້ນສັນຍາທີ່ໄດ້ໃຫ້** | | **106,246,043,970** | **88,069,407,155** |
| II | **ຫຼັກຊັບຄ້ຳປະກັນ ແລະ ການຈຳນອງ** | | | |
| A | **ຫຼັກຊັບຄ້ຳປະກັນ ແລະ ການຈຳນອງສຳລັບເງິນກູ້** | | **4,055,061,701,122** | **4,334,983,424,148** |
| 1 | ຫຼັກຊັບຄ້ຳປະກັນ ແລະ ການຈຳນອງ ສຳລັບເງິນກູ້ໃຫ້ລູກຄ້າ | | 4,055,061,701,122 | 4,334,983,424,148 |
| | **ລວມຫຼັກຊັບຄ້ຳປະກັນ ແລະ ການຈຳນອງ** | | **4,161,307,745,092** | **4,423,052,831,303** |

ກະກຽມໂດຍ:

ທ່ານ ຄຳສິງ ສອນສິນນະວົງ
ຮອງຜູ້ອຳນວຍການໃຫຍ່ ແລະ ຫົວໜ້າພະແນກບັນຊີ

ອະນຸມັດໂດຍ:

ທ່ານ ວິໄລ ສີພະພອນ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

27 ພຶດສະພາ 2021

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020

| | ທຶນຈົດທະບຽນ ຖອກແລ້ວ ກີບ | ຄັງສະສົມຕາມ ລະບຽບການ ກີບ | ຄັງສະສົມຂະຫຍາຍ ທຸລະກິດ ກີບ | ຄັງສຳຮອງຈາກການ ຕີມູນຄ່າ ກີບ | ເງິນແຮທົ່ວໄປສຳລັບ ກິດຈະກຳສິນເຊື່ອ ກີບ | ກຳໄລ/(ຂາດທຶນ) ສະສົມ ກີບ | ລວມ ກີບ |
|---|---|---|---|---|---|---|---|
| **ຍອດເຫຼືອນະ ວັນທີ 31 ທັນວາ 2019** | **404,666,100,000** | **391,685,038** | **550,517,242** | **94,029,775,080** | **16,488,032,405** | **(10,642,712,546)** | **505,483,397,219** |
| ກຳໄລສຸດທິພາຍໃນປີ | - | - | - | - | - | 85,683,713,472 | 85,683,713,472 |
| ຄັງສະສົມຕາມລະບຽບການພາຍໃນປີ | | 8,568,371,374 | - | - | - | (8,568,371,347) | - |
| ຄັງສະສົມຂະຫຍາຍທຸລະກິດ | - | - | 4,284,185,674 | | | (4,284,185,674) | - |
| ເງິນປັນຜົນຈ່າຍໃຫ້ຜູ້ຖືຫຸ້ນ | - | - | - | | | (30,571,898,001) | (30,571,898,001) |
| ເງິນແຮທົ່ວໄປສຸດທິສຳລັບກິດຈະກຳສິນເຊື່ອພາຍໃນປີ | - | - | - | - | 5,389,741,999 | - | 5,389,741,999 |
| ສ່ວນຕ່າງຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ | - | - | - | - | 817,555,224 | - | 817,555,224 |
| **ຍອດເຫຼືອນະ ວັນທີ 31 ທັນວາ 2020** | **404,666,100,000** | **8,960,056,385** | **4,834,702,916** | **94,029,775,080** | **22,695,329,628** | **31,616,545,904** | **566,802,509,913** |

ກະກຽມໂດຍ:

ທ່ານ ຄຳສິງ ສອນສິນນະວົງ
ຮອງຜູ້ອຳນວຍການໃຫຍ່ ແລະ ຫົວໜ້າພະແນກ ບັນຊີ

ອະນຸມັດໂດຍ:

ທະນາຄານ ຮ່ວມພັດທະນາ ຈຳກັດ JOINT DEVELOPMENT BANK

ທ່ານ ວິໄລ ສີພະພອນ
ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

27 ພຶດສະພາ 2021

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020

| | *ບົດອະທິບາຍ ເລກທີ* | *2020 ກີບ* | *2019 ກີບ* |
|---|---|---|---|
| **ກິດຈະກຳການດຳເນີນງານ** | | | |
| **ກຳໄລສຸດທິກ່ອນຫັກອາກອນ** | | **109,172,787,594** | **51,157,480,885** |
| *ດັດແກ້ສຳລັບ:* | | | |
| ກຳໄລຈາກການລົງທຶນ | | - | (5,142,666,667) |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ | | 21,034,031,212 | 24,293,402,766 |
| ລາຍຈ່າຍເງິນແຮສຸດທິ | | 5,296,646,888 | 2,791,783,516 |
| ລາຍຮັບດອກເບ້ຍ | | (329,731,830,822) | (238,383,764,017) |
| ລາຍຈ່າຍດອກເບ້ຍ | | 259,603,257,712 | 184,152,289,220 |
| **ກະແສເງິນສົດຈາກກຳໄລໃນການດຳເນີນງານ ກ່ອນການປ່ຽນແປງຊັບສິນ ແລະ ໜີ້ສິນໃນການດຳເນີນງານ** | | **65,374,892,584** | **18,868,525,703** |
| (ເພີ່ມຂຶ້ນ)/ຫຼຸດລົງ ຂອງຊັບສິນຈາກການດຳເນີນງານ | | | |
| ເງິນຝາກກັບທະນາຄານອື່ນ | | (28,102,013,935) | (62,622,931,444) |
| ເງິນກູ້ໃຫ້ແກ່ລູກຄ້າ | | (1,279,835,625,107) | (1,124,478,225,058) |
| ຊັບສິນທາງການເງິນອື່ນໆ | | 22,870,000,000 | 27,490,610,000 |
| ຊັບສິນອື່ນໆ | | (88,604,479,796) | (98,452,286,496) |
| ເພີ່ມຂຶ້ນ/(ຫຼຸດລົງ) ໃນໜີ້ສິນຈາກການດຳເນີນງານ | | | |
| ເງິນຝາກຢູ່ທະນາຄານອື່ນ | | 828,050,490,722 | (8,773,110,280) |
| ເງິນຝາກຂອງລູກຄ້າ ແລະ ໜີ້ຕ້ອງສົ່ງອື່ນໆໃຫ້ແກ່ລູກຄ້າ | | 1,705,260,532,811 | 1,314,862,884,123 |
| ໜີ້ສິນອື່ນໆ | | 10,498,717,028 | 411,879,351 |
| ດອກເບ້ຍທີ່ໄດ້ຮັບ | | 313,947,329,508 | 225,070,589,848 |
| ດອກເບ້ຍທີ່ໄດ້ຈ່າຍ | | (203,001,882,624) | (143,262,312,702) |
| ອາກອນກຳໄລທີ່ໄດ້ຈ່າຍ | 23 | (24,542,623,702) | (14,334,060,426) |
| **ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ** | | **1,321,915,337,489** | **134,781,562,646** |
| **ກິດຈະກຳການລົງທຶນ** | | | |
| ການຊຳລະເງິນເພື່ອຊື້ ແລະ ການກໍ່ສ້າງຊັບສົມບັດຄົງທີ່ໃໝ່ | | (27,388,303,140) | (1,339,187,044) |
| ຮັບຈາກການສະສາງຊັບສິນ | 6 | 119,333,456 | 6,926,000 |
| ເງິນປັນຜົນທີ່ໄດ້ຮັບ | | 100,000,000 | 160,000,000 |
| ການລົງທຶນໃນການຮ່ວມທຶນ | | (340,000,000) | - |
| **ກະແສເງິນສົດສຸດທິນຳໃຊ້ໃນກິດຈະກຳການລົງທຶນ** | | **(27,508,969,684)** | **(1,172,261,044)** |
| **ກິດຈະກຳທາງການເງິນ** | | | - |
| ເງິນປັນຜົນຈ່າຍໃຫ້ຜູ້ຖືຮຸ້ນ | | (30,571,898,000) | - |
| **ກະແສເງິນສົດສຸດທິໃຊ້ໃນກິດຈະກຳທາງການເງິນ** | | **(30,571,898,000)** | - |

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານກະແສເງິນສົດ (ຕໍ່)
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2020

| | *ບົດອະທິບາຍ ເລກທີ* | *2020 ກີບ* | *2019 ກີບ* |
|---|---|---|---|
| ປ່ຽນແປງສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ | | **1,263,834,469,805** | 133,609,301,602 |
| ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ | | **924,180,695,282** | 790,571,393,680 |
| ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ | **24** | **2,188,015,165,087** | 924,180,695,282 |

ກະກຽມໂດຍ: | ອະນຸມັດໂດຍ:

ທ່ານ ຄຳສິງ ສອນສີນນະວົງ
ຮອງຜູ້ອຳນວຍການໃຫຍ່ ແລະ ຫົວໜ້າພະແນກ ບັນຊີ

ທ່ານ ວິໄລ ສີພະພອນ
ຜູ້ອຳນວຍການໃຫຍ່

ທະນາຄານ ແຫ່ງ ສປປ ລາວ ທະນາຄານ ຮ່ວມພັດທະນາ ຈຳກັດ JOINT DEVELOPMENT BANK ນະຄອນຫຼວງວຽງຈັນ

ນະຄອນຫຼວງວຽງຈັນ, ສປປ ລາວ

27 ພຶດສະພາ 2021